ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ

ເລກທີ: 0200../ສ.ອ.ນ

ນະຄອນຫຼວງວຽງຈັນ, ວັນທີ 23 ກຸມພາ 2023

# ແຈ້ງເລື່ອນປະຊຸມ

**ຮຽນ:** ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ນັບຖື.

**ເລື່ອງ:** ແຈ້ງເລື່ອນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ຈາກ ວັນທີ 08 ເມສາ 2023 ມາເປັນ ວັນທີ 07 ເມສາ 2023 ແທນ.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ຂອງ ຄຄຊ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມິຖຸນາ 2022;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບເລກທີ 01/ສຄຄຊ, ລົງວັນທີ 16 ພຶດສະພາ 2022.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ( ສ.ອ.ນ ) ຂໍຖືເປັນກຽດແຈ້ງເລື່ອນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ທີ່ ກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2023, ວັນທີ 14 ກຸມພາ 2023 ໄດ້ກຳນົດເອົາ ວັນທີ 08 ເມສາ 2023 ເປັນມື້ຈັດກອງປະຊຸມ ໂດຍມື້ດັ່ງກ່າວກົງກັບວັນພັກທາງລັດຖະການ, ເຊິ່ງລະບົບທາງເຕັກນິກ ຂອງທາງຕະຫຼາດຫຼັກຊັບລາວ ບໍ່ສາມາດຮັບຮອງຜົນ ຂອງກອງປະຊຸມໃນມື້ວັນພັກທາງລັດຖະການໄດ້, ບໍລິສັດຂອງພວກເຮົາ ຈຶ່ງຂໍເລື່ອນມື້ຈັດກອງປະຊຸມມາເປັນ ວັນທີ 07 ເມສາ 2023 ແທນ, ສະຖານທີ່ຈັດກອງປະຊຸມ ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ,

**ປະທານສະພາບໍລິຫານ**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

**ທ່ານ ສົມຈິດ ອິນທະມິດ**